# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ...**ໜ້າ 01-06**

**II.** ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ........................................................ **ໜ້າ 07-09**

**III.** ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ...................................................... **ໜ້າ 10-15**

**IV.** ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ ................................................**ໜ້າ 16-17**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ມິຖຸນາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 16/06/2023, ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ເປັນປະທານກອງປະຊຸມກົມການເມືອງ, ຄະນະເລຂາທິການສູນກາງພັກ ເພື່ອປະກອບຄຳເຫັນໃສ່ຮ່າງບົດສະຫຼຸບ 20 ປີ ໃນການສືບຕໍ່ປະຕິບັດມະຕິຂອງຄະນະເລຂາທິການສູນກາງພັກ ສະໄໝທີ IX ກ່ຽວກັບການເສີມຂະຫຍາຍກຳລັງແຮງມະຫາສາມັກຄີທົ່ວປວງຊົນທັງຊາດ ເພື່ອປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມຍຸຕິທຳ, ປະຊາທິປະໄຕ, ສີວິໄລ. ສະຫາຍຜູ້ປະຈຳການຄະນະຊີ້ນຳ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນດັ່ງກ່າວ ແລະ ກອງປະຊຸມ ໄດ້ເປັນເອກະພາບໃນການຕີລາຄາວ່າ: ໃນຊຸມປີຜ່ານມາ, ໂດຍສະເພາະແມ່ນໃນໄລຍະ 20 ປີ ໃນການປະຕິບັດມະຕິດັ່ງກ່າວນັ້ນ, ກຳລັງແຮງຂອງກຸ່ມກ້ອນມະຫາສາມັກຄີທົ່ວປວງຊົນທັງຊາດ ໄດ້ຮັບການປັບປຸງ, ເພີ່ມທະວີ ແລະ ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ, ໄດ້ປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ຮັບປະກັນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດ. ສະຫາຍ ຫງວຽນ ຟູຈ້ອງ ໄດ້ເນັ້ນໜັກໃຫ້ສືບຕໍ່ເສີມຂະຫຍາຍມູນເຊື້ອມະຫາສາມັກຄີທົ່ວປວງຊົນທັງຊາດ ທີ່ໄດ້ຖອດຖອນ ແລະ ສືບທອດຈາກບັນພະບູລຸດ ໃນການສ້າງສາປະເທດຊາດໃຫ້ນັບມື້ນັບຮັ່ງມີ, ເຂັ້ມແຂງ, ສີວິໄລ ແລະ ຜາສຸກ.

ວັນທີ 09/06/2023, ທ່ານ ນາງ ເຈືອງທິມາຍ, ກຳມະການກົມການເມືອງ, ຜູ້ປະຈຳການຄະນະເລຂາທິການ, ຫົວໜ້າຄະນະຈັດຕັ້ງສູນກາງພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບຄະນະຜູ້ແທນຂັ້ນສູງພັກກອມມູນິດອິນເດຍມາກຊິດ (CPI-M) ນຳໂດຍ ທ່ານ Sitaram Yechury, ເລຂາທິການໃຫຍ່ພັກ CPI-M ໃນໂອກາດຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ ຫວຽດນາມ. ທ່ານ ນາງ ເຈືອງທິມາຍ ໄດ້ແຈ້ງໃຫ້ຊາບວ່າ ພັກກອມມູນິດຫວຽດນາມ ພວມດຳເນີນການສະຫຼຸບບົດຮຽນ 40 ປີ ແຫ່ງການປະຕິບັດພາລະກິດປ່ຽນແປງໃໝ່. ທ່ານ Yechury ໄດ້ແຈ້ງຜົນການພົບປະກັບຜູ້ຕາງໜ້າການນຳບັນດາອົງການສູນກາງພັກກອມມູນິດຫວຽດນາມ ແລະ ບັນດາເນື້ອໃນແລກປ່ຽນຈະຊ່ວຍໃຫ້ພັກ CPI-M ປະຕິບັດ ແລະ ຜັນຂະຫຍາຍມະຕິຂອງພັກໃນຕໍ່ໜ້າ. ຄະນະຜູ້ແທນພັກ CPI-M ຍັງໄດ້ມີການພົບປະກັບ ທ່ານ ເລອ່ວາຍຈຸງ, ຫົວໜ້າ ຄຕພ ຫວຽດນາມ; ທ່ານ ຟ້າມເຕິດຖັ່ງ, ຮອງຫົວໜ້າຜູ້ປະຈຳການຄະນະຂົນຂວາຍປະຊາຊົນສູນກາງພັກ; ຜູ້ຕາງໜ້າການນຳຄະນະເສດຖະກິດສູນກາງ ແລະ ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ, ຊຶ່ງໄດ້ປຶກສາຫາລືກັນໃນຫຼາຍບັນຫາ ເພື່ອແນໃສ່ເພີ່ມທະວີການພົວພັນລະຫວ່າງສອງພັກ-ສອງລັດ.

ວັນທີ 04/06/2023, ທ່ານ ຫວໍ ວັນເຖືອງ, ປະທານປະເທດ ສສ ຫວຽດນາມ ໄດ້ຕ້ອນຮັບ ທ່ານ Anthony Albanese, ນາຍົກລັດຖະມົນຕີອົດສະຕຣາລີ ໃນໂອກາດຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ ລະຫວ່າງວັນທີ 02-03/06/2023. ທ່ານ ຫວໍ ວັນເຖືອງ ໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານອົດສະຕຣາລີ ທີ່ໄດ້ຊ່ວຍເຫຼືອ ສສ ຫວຽດນາມ ໃນຫຼາຍດ້ານ ໂດຍສະເພາະການຊ່ວຍເຫຼືອລ້າ (ODA), ການສະກັດກັ້ນ ແລະ ຄວບຄຸມການແຜ່ລະບາດໂຄວິດ-19. ທ່ານ Albanese ໄດ້ກ່າວວ່າ ສສ ຫວຽດນາມ ເປັນປະເທດທີ່ມີບົດບາດສຳຄັນໃນພາກພື້ນ; ອົດສະຕຣາລີ ຈະສືບຕໍ່ຮ່ວມມືກັບ ສສ ຫວຽດນາມ ກໍຄືບັນດາປະເທດອາຊຽນໃນຂົງເຂດການເມືອງ, ການຕ່າງປະເທດ, ການປ້ອງກັນຄວາມສະຫງົບ, ເສດຖະກິດ-ການຄ້າ, ການສຶກສາ, ວັດທະນະທຳ, ການທ່ອງທ່ຽວ ແລະ ການໄປມາຫາສູ່ຂອງປະຊາຊົນສອງຊາດ.

### 2). ພັກກອມມູນິດຈີນ

ວັນທີ 23/06/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ສົ່ງໂທລະເລກສະແດງຄວາມເຫັນໃຈເຖິງ ທ່ານ Yoweri Museveni, ປະທານາທິບໍດີອູກັນດາ ຕໍ່ເຫດການໂຈມຕີຢູ່ໂຮງຮຽນແຫ່ງໜຶ່ງຂອງອູກັນດາ, ຊຶ່ງມີເນື້ອໃນບາງຕອນລະບຸວ່າ: ຂ້າພະເຈົ້າ ໄດ້ຮັບຂ່າວທີ່ຕື່ນຕົກໃຈຢ່າງຍິ່ງຕໍ່ເຫດການໂຈມຕີໂຮງຮຽນ ຢູ່ ທາງພາກຕາເວັນຕົກຂອງອູກັນດາ, ເປັນການກໍ່ການຮ້າຍທີ່ເຮັດໃຫ້ມີຜູ້ເສຍຊີວິດ ແລະ ບາດເຈັບຈຳນວນຫຼາຍ; ຕາງໜ້າໃຫ້ລັດຖະບານ ແລະ ປະຊາຊົນຈີນ ສະແດງຄວາມໄວ້ອາໄລຢ່າງສຸດຊຶ້ງຕໍ່ຄອບຄົວຜູ້ເສຍຊີວິດ ແລະ ບາດເຈັບ. ສປ ຈີນ ຂໍກ່າວປະນາມຕໍ່ເຫດການໃນຄັ້ງນີ້, ຈະສືບຕໍ່ສະໜັບສະໜູນການຕ້ານການກໍ່ການຮ້າຍ, ປົກປັກຮັກສາຄວາມໝັ້ນຄົງ ແລະ ສະຖຽນລະພາບຂອງອູກັນດາ.

ລະຫວ່າງວັນທີ 18/06/2023, ທ່ານ ສີ ຈິ້ນຜິງ, ປະທານປະເທດແຫ່ງ ສປ ຈີນ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ Anthony Blinken, ລັດຖະມົນຕີຕ່າງປະເທດ ສ.ອາເມລິກາ ທີ່ເດີນທາງຢ້ຽມຢາມ ສປ ຈີນ ຢ່າງເປັນທາງການລະຫວ່າງວັນທີ 18-19/06/2023; ທ່ານ Anthony Blinken ຍັງໄດ້ພົບປະກັບ ທ່ານ ສິນ ກ່າງ, ລັດຖະມົນຕີຕ່າງປະເທດ ສປ ຈີນ; ເຂົ້າຢ້ຽມຂ່ຳນັບ ທ່ານ ຫວາງ ອີ້, ຫົວໜ້າຫ້ອງການຄະນະກຳມະການວຽກງານການຕ່າງປະເທດສູນກາງພັກກອມມູນິດຈີນ. ໃນການເຂົ້າຢ້ຽມຂ່ຳນັບປະທານປະເທດ ສປ ຈີນ, ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ໂລກຕ້ອງການເຫັນການພົວພັນຂອງ ສປ ຈີນ-ສ.ອາເມລິກາ ມີຄວາມໝັ້ນຄົງ, ການພົວພັນຂອງສອງປະເທດ ແມ່ນຕິດພັນກັບຊະຕາກຳຂອງມວນມະນຸດ ແລະ ຄວນໄດ້ຮັບການແກ້ໄຂໃຫ້ດີຂຶ້ນ ເພື່ອປະກອບສ່ວນເຂົ້າໃນການຮັກສາສັນຕິພາບ ແລະ ການພັດທະນາຂອງໂລກ. ບັນດາປະເທດໃຫຍ່ແຂ່ງຂັນກັນ ແມ່ນບໍ່ສອດຄ່ອງກັບກະແສຂອງຍຸກສະໄໝ, ບໍ່ສາມາດແກ້ໄຂບັນຫາພາຍໃນຂອງ ສ.ອາເມລິກາ ແລະ ບັນດາສິ່ງທ້າທາຍທີ່ໂລກກຳລັງປະເຊີນຢູ່ໄດ້. ສປ ຈີນ ເຄົາລົບຜົນປະໂຫຍດຂອງ ສ.ອາເມລິກາ ແລະ ເຊັ່ນດຽວກັນ ສ.ອາເມລິກາ ກໍຄວນເຄົາລົບ ສປ ຈີນ, ບໍ່ທຳລາຍສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສປ ຈີນ. ທ່ານ Blinken ກ່າວວ່າ ປະທານາທິບໍດີໄບເດັນ ເຊື່ອໝັ້ນວ່າ ສ.ອາເມລິກາ ແລະ ສປ ຈີນ ມີຄວາມຮັບຜິດຊອບ ແລະ ພັນທະໜ້າທີ່ຈະຕ້ອງຮັກສາການພົວພັນສອງຝ່າຍໃຫ້ດີ.

ລະຫວ່າງວັນທີ 18-20/06/2023, ທ່ານ ຫຼີ ສຽງ, ນາຍົກລັດຖະມົນຕີ ສປ ຈີນ ໄດ້ເດີນທາງຢ້ຽມຢາມເຢຍລະມັນ ຢ່າງເປັນທາງການ ເພື່ອເຂົ້າຮ່ວມກອງປະຊຸມປຶກສາຫາລື ສປ ຈີນ-ເຢຍລະມັນ ຄັ້ງທີ 07 ແລະ ໄດ້ພົບປະກັບທ່ານ Olaf Scholz, ນາຍົກລັດຖະມົນຕີເຢຍລະມັນ ຢູ່ ນະຄອນຫຼວງແບ໋ກລັງ. ທ່ານ ຫຼີ ສຽງ ໄດ້ກ່າວວ່າ ສປ ຈີນ ເນັ້ນໜັກການສົ່ງເສີມການຮ່ວມມືໃຫ້ໃກ້ຊິດກັບເຢຍລະມັນຫຼາຍຂຶ້ນ, ເຊື່ອໝັ້ນວ່າການຮ່ວມມືທີ່ເຂັ້ມແຂງ ຈະສາມາດຮັກສາກົນໄກການຂັບເຄື່ອນເສດຖະກິດໂລກໄດ້ປົກກະຕິ. ທ່ານ Scholz ກ່າວວ່າ ເຢຍລະມັນ ບໍ່ຕ້ອງການດຳເນີນນະໂຍບາຍເສດຖະກິດແບບແບ່ງຝ່າຍ, ເຢຍລະມັນຈຳເປັນຕ້ອງມີຄູ່ຄ້າທີ່ຫຼາກຫຼາຍ ແລະ ສປ ຈີນ ເປັນຄູ່ຄ້າທີ່ໃຫຍ່ທີ່ສຸດຂອງເຢຍລະມັນ. ພາຍຫຼັງສຳເລັດການຢ້ຽມຢາມເຢຍລະມັນ, ວັນທີ 21/06/2023, ທ່ານ ຫຼີ ສຽງ ໄດ້ເດີນທາງຢ້ຽມຢາມຝຣັ່ງ ຢ່າງເປັນທາງການ ເພື່ອເຂົ້າຮ່ວມກອງປະຊຸມສຸດຍອດສັນຍາຜູກຂາດການລະດົມທຶນສາກົນ ແລະ ໄດ້ພົບປະກັບ ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ.

**3). ພັກແຮງງານເກົາຫຼີ**

ວັນທີ 16-18/06/2023, ສູນກາງພັກແຮງງານເກົາຫຼີ ໄດ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 8 ສະໄໝທີ VIII ໂດຍການເປັນປະທານ ຂອງ ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ. ກອງປະຊຸມ ໄດ້ສະຫຼຸບຕີລາຄາກ່ຽວກັບບັນດາຍຸດທະສາດທີ່ໄດ້ວາງອອກໃນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 8 ສະໄໝທີ VIII, ໄດ້ປຶກສາຫາລື ແລະ ເອກະພາບກັນຮັບຮອງເອົາ 6 ວາລະສຳຄັນຄື: 1) ການຕີລາຄາການຈັດຕັ້ງປະຕິບັດບັນດານະໂຍບາຍທີ່ສຳຄັນໃນ 6 ເດືອນຕົ້ນປີ 2023; 2) ການກຳນົດມາດຕະການສຳຄັນເພື່ອພັດທະນາການສຶກສາ; 3) ການສົ່ງເສີມບົດບາດຂອງພະນັກງານທຸກຂັ້ນ; 4) ການເສີມຂະຫຍາຍອຳນາດປະຊາຊົນ; 5) ບັນດາມາດຕະການທີ່ສຳຄັນເພື່ອຍູ້ແຮງການສ້າງລະບຽບວິໄນພັກ ແລະ 6) ການເລືອກຕັ້ງ ແລະ ປັບປຸງບຸກຄະລາກອນ. ພ້ອມດຽວກັນ, ກອງປະຊຸມ ຍັງໄດ້ຍົກບັນຫາການພັດທະນາລະບົບດາວທຽມສອດແນມທາງການທະຫານຂຶ້ນມາປຶກສາຫາລືກັນ ເພື່ອພັດທະນາຄວາມອາດສາມາດໃນການປ້ອງກັນປະເທດ, ຊຶ່ງໄດ້ຊີ້ໃຫ້ເຫັນວ່າ ສປປ ເກົາຫຼີ ໄດ້ໃຫ້ຄວາມສຳຄັນໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການປົກປ້ອງອະທິປະໄຕຂອງຕົນ.

ວັນທີ 12/6/2023, ທ່ານ ກິມ ເຈິງອຸນ, ຜູ້ນຳສູງສຸດຂອງ ສປປ ເກົາຫຼີ ໄດ້ສົ່ງສານອວຍພອນເຖິງ ທ່ານ ປູຕິນ, ປະທານາທິບໍດີລັດເຊຍ ເນື່ອງໃນໂອກາດວັນຊາດຂອງລັດເຊຍ ຄົບຮອບ 31 ປີ ໂດຍມີເນື້ອໃນບາງຕອນລະບຸວ່າ: ສປປ ເກົາຫຼີ ສະແດງຄວາມຊົມເຊີຍຕໍ່ຜົນງານຂອງລັດເຊຍ ທີ່ຍາດມາໄດ້ຕະຫຼອດໄລຍະ 31 ປີ, ຕີລາຄາສູງຕໍ່ສາຍພົວພັນຮ່ວມມືມິດຕະພາບທີ່ຍາວນານລະຫວ່າງ ສປປ ເກົາຫຼີ ແລະ ລັດເຊຍ, ຊົມເຊີຍຕໍ່ການນຳພາຂອງ ທ່ານ ປູຕິນ ໃນການຕອບໂຕ້ຕໍ່ກັບໄພຄຸກຄາມຕ່າງໆ; ປະຊາຊົນ ສປປ ເກົາຫຼີ ສະໜັບສະໜູນ ແລະ ຢືນຄຽງຂ້າງປະຊາຊົນລັດເຊຍ ເພື່ອບັນລຸເປົ້າໝາຍອັນຍິ່ງໃຫຍ່ໃນການສ້າງປະເທດມະຫາອຳນາດ ແລະ ເພື່ອປົກປ້ອງອະທິປະໄຕຂອງລັດເຊຍຈາກໄພຂົ່ມຂູ່ຂອງບັນດາປະເທດຈັກກະພັດ. ສປປ ເກົາຫຼີ ຈະຍົກລະດັບການຮ່ວມມືກັບລັດເຊຍທາງດ້ານຍຸດທະສາດໃຫ້ໃກ້ຊິດກັນຍິ່ງໆຂຶ້ນ.

**4). ພັກກອມມູນິດກູບາ**

ລະຫວ່າງວັນທີ 20-23/06/2023, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ເດີນທາງຢ້ຽມຢາມ ອີຕາລີ, ແຊັກບີ ແລະ ຝຣັ່ງ ຢ່າງເປັນທາງການ. ການຢ້ຽມຢາມອີຕາລີ, ທ່ານ Miguel ໄດ້ພົບປະກັບ ທ່ານ ນາງ Giorgia Meloni, ນາຍົກລັດຖະມົນຕີອີຕາລີ, ສອງຝ່າຍ ໄດ້ປຶກສາຫາລືທາງດ້ານການເມືອງ, ການພັດທະນາ, ການລົງທຶນ, ການພົວພັນດ້ານເສດຖະກິດ ແລະ ການຄ້າ. ການຢ້ຽມຢາມແຊັກບີ, ທ່ານ Miguel ໄດ້ພົບປະກັບ ທ່ານ Aleksandar Vučić, ປະທານາທິບໍດີແຊັກບີ, ສອງຝ່າຍໄດ້ປຶກສາຫາລືກັນໃນການຮັດແໜ້ນການພົວພັນທາງດ້ານການເມືອງ, ເສດຖະກິດ, ການຄ້າ ແລະ ການຮ່ວມມື. ສໍາລັບການຢ້ຽມຢາມຝຣັ່ງ, ທ່ານ Miguel ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດ ວ່າດ້ວຍຂໍ້ຕົກລົງທາງການເງິນລະດັບໂລກສະບັບໃໝ່.

ລະຫວ່າງວັນທີ 12-14/06/2023, ທ່ານ Manuel Marrero, ນາຍົກລັດຖະມົນຕີກູບາ ໄດ້ເດີນຢ້ຽມຢາມລັດເຊຍ ຢ່າງເປັນທາງການ ພົບປະແລກປ່ຽນບັນຫາຕ່າງໆກັບຄູ່ຮ່ວມຕໍາແໜ່ງຂອງລັດເຊຍ ແລະ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ Vladimir Putin, ປະທານາທິບໍດີລັດເຊຍ. ສອງຝ່າຍ ເຫັນດີສືບຕໍ່ຮັດແໜ້ນສາຍພົວພັນໂດຍສະເພາະການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືຕ່າງໆ. ທ່ານ Marrero ໄດ້ສະແດງຄວາມຊົມເຊີຍຕໍ່ສາຍພົວພັນສອງປະເທດໄດ້ຮັບການພັດທະນາ ແລະ ກໍາລັງກ້າວໄປຂ້າງໜ້າ ໂດຍສະເພາະທາງດ້ານການເມືອງ, ເສດຖະກິດ ແລະ ການຄ້າ. ທ່ານ Putin ໄດ້ກ່າວວ່າ ລັດເຊຍ-ກູບາ ມີສາຍພົວພັນແບບພິເສດ, ໃນທ່າມກາງສະພາບການຂອງໂລກມີຄວາມຫຍຸ້ງຍາກ, ການຮ່ວມມືສອງຝ່າຍຄວນໄດ້ຮັບການພັດທະນາໃຫ້ກວ້າງຂຶ້ນຕື່ມໃນຂົງເຂດອື່ນໆ ໂດຍສະເພາະດ້ານພະລັງງານ ແລະ ການທ່ອງທ່ຽວ. ການຢ້ຽມຢາມຄັ້ງນີ້, ທ່ານ Marrero ຍັງໄດ້ເຂົ້າຮ່ວມກອງປະຊຸມສາກົນພາຍໃຕ້ຫົວຂໍ້: ເວທີເສດຖະກິດສາກົນ (International Economic Forum) ທີ່ ນະຄອນເຊັນປີເຕີສະເບີກ ຂອງລັດເຊຍ.

**5). ສະພາບການເມືອງແອັດສະປາຍ**

ວັນທີ 29/5/2023, ທ່ານ Pedro Sanchez, ນາຍົກລັດຖະມົນຕີແອັດສະປາຍ ໄດ້ປະກາດຍຸບສະພາເພື່ອຈັດການເລືອກຕັ້ງທົ່ວໄປກ່ອນກໍານົດ, ຊຶ່ງຈະຈັດຂຶ້ນໃນວັນທີ 23/7/2023. ການປະກາດຍຸບສະພາຄັ້ງນີ້ ເນື່ອງຈາກພັກແຮງງານສັງຄົມນິຍົມ (Spanish Socialist Workers' Party) ພາຍໃຕ້ການນໍາຂອງ ທ່ານ Sanchez ເສຍໄຊໃນການເລືອກຕັ້ງທ້ອງຖິ່ນ 12 ແຫ່ງ ຈາກທັງໝົດ 17 ແຫ່ງ ໃນທົ່ວປະເທດທີ່ຈັດຂຶ້ນໃນວັນທີ 28/5/2023 ຜ່ານມາ. ຂະນະທີ່, ບັນດາພັກຝ່າຍຂວາຄື: ພັກ People's party ແລະ ພັກ VOX ໄດ້ຮັບຄະແນນສຽງສະໜັບສະໜູນເພີ່ມຂຶ້ນ.

**6). ການເມືອງຕວັກກີ**

ພາຍຫຼັງການເລືອກຕັ້ງປະທານາທິບໍດີຕວັກກີທົ່ວປະເທດ ໃນວັນທີ 14/5/2023, ບໍ່ມີຜູ້ໄດ້ຮັບຄະແນນສຽງສະໜັບສະໜູນເກີນ 50%. ວັນທີ 28/5/2023, ຄະນະກໍາມະການການເລືອກຕັ້ງຕວັກກີ ຈຶ່ງໄດ້ຈັດການເລືອກຕັ້ງ ຮອບທີ 2, ຊຶ່ງຜົນການເລືອກຕັ້ງແມ່ນ ທ່ານ Recep Tayyip Erdogan, ປະທານາທິບໍດີຕວັກກີຄົນປັດຈຸບັນ, ຈາກພັກ AKP ໄດ້ຮັບຄະແນນສຽງສະໜັບສະໜູນ 52,14%, ສ່ວນ ທ່ານ Kemal Kilicdaroglu, ຜູ້ນໍາພັກຝ່າຍຄ້ານ, ຈາກພັກ CHP ໄດ້ 47,86%. ທ່ານ Erdogan ໄດ້ໄຊຊະນະ ແລະ ສືບຕໍ່ດໍາລົງຕໍາແໜ່ງເປັນປະທານາທິບໍດີຕວັກກີ ສະໄໝທີ 3 ນັບແຕ່ປີ 2014 ເປັນຕົ້ນມາ. ວັນທີ 03/06/2023, ທ່ານ Erdogan ໄດ້ເຂົ້າພິທີສາບານຕົນຮັບຕໍາແໜ່ງດັ່ງກ່າວ ແລະ ໄດ້ປະກາດຄະນະລັດຖະບານຊຸດໃໝ່ເກືອບທັງໝົດ ຍົກເວັ້ນ ລັດຖະມົນຕີກະຊວງສາທາລະນະສຸກ ແລະ ກະຊວງວັດທະນະທໍາ. ຄະນະລັດຖະບານຊຸດໃໝ່ປະກອບດ້ວຍ: ທ່ານ Cevdet Yilmaz, ເປັນຮອງປະທານາທິບໍດີ; ທ່ານ Hakan Fidan, ເປັນລັດຖະມົນຕີກະຊວງການຕ່າງປະເທດ; ທ່ານ Mehmet Simsek, ເປັນລັດຖະມົນຕີກະຊວງການເງິນ ແລະ ທ່ານ Yasar Guler, ເປັນລັດຖະມົນຕີກະຊວງປ້ອງກັນປະເທດ. ຂະນະທີ່, ທ່ານ ຕິ່ງ ຈົ້ງຫຼື, ຮອງປະທານຄະນະປະຈໍາສະພາປະຊາຊົນແຫ່ງຊາດຈີນ, ທູດພິເສດຂອງ ທ່ານ ສີ ຈິ້ນຜິງ ໄດ້ເຂົ້າຮ່ວມພິທີສາບານຕົນຮັບຕໍາແໜ່ງຂອງ ທ່ານ Erdogan ທີ່ນະຄອນຫຼວງອັງກາລາ; ໄດ້ແຈ້ງສານສະແດງຄວາມຊົມເຊີຍຂອງ ທ່ານ ສີ ຈິ້ນຜິງ ເຖິງ ທ່ານ Erdogan ຕໍ່ກັບການຮັບຕໍາແໜ່ງປະທານາທິບໍດີຕວັກກີ ອີກສະໄໝໜຶ່ງ, ສປ ຈີນ ຈະສືບຕໍ່ພົວພັນຮ່ວມມືກັບຕວັກກີ, ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈທາງດ້ານການເມືອງ, ສົ່ງເສີມມິດຕະພາບອັນເປັນມູນເຊື້ອ, ຊຸກຍູ້ການພົວພັນຮ່ວມມືຍຸດທະສາດ ສປ ຈີນ-ຕວັກກີ ໃຫ້ໝັ້ນຄົງ ແລະ ຍາວນານ.

2. **ສະພາບການພາກພື້ນ ແລະ ສາກົນ**

1) **ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ໃນໄລຍະເດືອນ ມິຖຸນາ 2023, ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ ມີຫຼາຍເຫດການເກີດຂຶ້ນດັ່ງນີ້:

- ວັນທີ 03/06/2023, ອາເມລິກາ ແລະ ການາດາ ໄດ້ຮ່ວມກັນຊ້ອມຮົບໃນເຂດໃກ້ກັບໄຕຫວັນ, ເຮັດໃຫ້ກອງທັບ ສປ ຈີນ ໃຊ້ເຮືອຮົບເຄື່ອນກຳລັງໄປໃກ້ກັບເຮືອຮົບ USS Chung-Hoon ຂອງອາເມລິກາ ໃນໄລຍະ 140 ແມັດ ເຮັດໃຫ້ເຮືອຮົບຂອງອາເມລິກາ ຕ້ອງຖອຍອອກຈາກເຂດດັ່ງກ່າວ. ຂະນະທີ່, ອາເມລິກາ, ຍີ່ປຸ່ນ ແລະ ຟີລິບປິນ ກໍໄດ້ຮ່ວມກັນຊ້ອມຮົບຢູ່ຟີລິບປິນ. ສ່ວນ ສປ ຈີນ ແລະ ລັດເຊຍ ໄດ້ຮ່ວມກັນລາດຕະເວນທາງອາກາດ ຄັ້ງທີ 06 ຢູ່ເຂດໃກ້ກັບທະເລຍີ່ປຸ່ນ ແລະ ທະເລຈີນຕາເວັນອອກ.

- ສະຖາບັນຄົ້ນຄວ້າຍຸດທະສາດສາກົນຂອງສິງກະໂປ (International Institute for Strategic Studies -IISS) ເປັນເຈົ້າພາບຈັດກອງປະຊຸມສຸດຍອດຄວາມໝັ້ນຄົງອາຊີ (Shangri-La Dialogue 2023) ຄັ້ງທີ 20 ລະຫວ່າງວັນທີ 2-4/6/2023. ມີຄະນະຜູ້ແທນເກືອບ 600 ຄົນ ຈາກ 40 ກວ່າປະເທດເຂົ້າຮ່ວມ. ກອງປະຊຸມໄດ້ປຶກສາຫາລືກັນໃນຫຼາຍບັນຫາ ເຊັ່ນ: ຄວາມໝັ້ນຄົງໃນຂົງເຂດອາຊີ-ປາຊີຟິກ, ສະພາບຄວາມເຄັ່ງຕຶງໃນອູແກຣນ, ສະພາບແຫຼມເກົາຫຼີ, ສະພາບມຽນມາ ແລະ ບັນຫາອື່ນໆ; ໄດ້ຮຽກຮ້ອງໃຫ້ບັນດາປະເທດທົ່ວໂລກເພີ່ມທະວີການຮ່ວມມືດ້ານເສດຖະກິດ, ຄວາມໝັ້ນຄົງ ແລະ ບັນຫາທ້າທາຍອື່ນໆ ເພື່ອຄວາມສະຫງົບ, ສະຖຽນລະພາບ ແລະ ສັນຕິພາບໃນພາກພື້ນ-ສາກົນ. ໃນກອງປະຊຸມ, ທ່ານ Lloyd Austin, ລັດຖະມົນຕີກະຊວງປ້ອງກັນປະເທດອາເມລິກາ ໄດ້ກ່າວວ່າບັນດາພັນທະມິດຂອງຕົນໃນຂົງເຂດອິນໂດ-ປາຊີຟິກ ຈະປ້ອງກັນການຖືກຂົ່ມຂູ່ໂດຍສະເພາະຢູ່ໃນຊ່ອງແຄບໄຕຫວັນ. ອາເມລິກາ ຮັບຮູ້ວ່າໄຕຫວັນເປັນສ່ວນໜຶ່ງຂອງ ສປ ຈີນ ແລະ ວ່າ ສປ ຈີນ ຕີຄວາມໝາຍຈຸດຢືນຂອງອາເມລິກາຜິດ. ຂະນະທີ່, ທ່ານ ຈີງ ຈ້ຽນເຟີງ, ຮອງຫົວໜ້າກົມເສນາທິການຄະນະກຳມາທິການສູນກາງ ສປ ຈີນ ກ່າວວ່າ ພຶດຕິກຳຂອງອາເມລິກາຕໍ່ກັບບັນຫາໄຕຫວັນບໍ່ຖືກຕ້ອງກັບຄວາມເປັນຈິງ ເພາະວ່າໄຕຫວັນເປັນດິນແດນຂອງ ສປ ຈີນ ແລະ ບໍ່ສາມາດແບ່ງແຍກອອກຈາກ ສປ ຈີນ ໄດ້; ການໂຮມດິນແດນໃຫ້ກັບມາລວມກັນອີກຄັ້ງ ແມ່ນຄວາມປາດຖະໜາຮ່ວມກັນຂອງປະຊາຊົນຈີນ ແລະ ໄຕຫວັນ.

- ການເມືອງໄທ: ພາຍຫຼັງການເລືອກຕັ້ງທົ່ວໄປຂອງໄທ ໃນວັນທີ 14/05/2023, ມີ 8 ພັກການເມືອງ ຈະຮ່ວມກັນຈັດຕັ້ງລັດຖະບານ ແລະ ໄດ້ລົງນາມໃນ MOU ຮ່ວມກັນ ໃນວັນທີ 22/5/2023 ຜ່ານມາ ແລະ ໄດ້ປະຊຸມຮ່ວມກັນເພື່ອວາງແຜນໃນການບໍລິຫານປະເທດ, ຊຶ່ງໄດ້ຈັດຕັ້ງຄະນະກຳມະການເຮັດວຽກໄລຍະຂ້າມຜ່ານ (Transition team) ໂດຍມີຫົວໜ້າພັກກ້າວໄກ ເປັນຫົວໜ້າ. ພ້ອມນັ້ນ, ຍັງໄດ້ຈັດຕັ້ງ 12 ຄະນະເຮັດວຽກຍ່ອຍ ຄື: 1. ຄະນະເຮັດວຽກດ້ານລາຄາພະລັງງານ. 2. ຄະນະແກ້ໄຂດ້ານໄພແລ້ງ ແລະ ໄພທຳມະຊາດ. 3. ຄະນະແກ້ໄຂບັນຫາ 3 ແຂວງພາກໃຕ້. 4. ຄະນະແກ້ໄຂລັດຖະທຳມະນູນ. 5. ຄະນະດ້ານສິ່ງແວດລ້ອມ. 6. ຄະນະເຮັດວຽກດ້ານເສດຖະກິດ ແລະ SMEs. 7. ຄະນະແກ້ໄຂບັນຫາສິ່ງເສບຕິດ. 8. ຄະນະຮັບຜິດຊອບດ້ານເສດຖະກິດ ແລະ ດິຈິຕອນ; 9. ຄະນະຮັບຜິດຊອບຄວາມເທົ່າທຽມທາງດ້ານເສດຖະກິດ ແລະ ສັງຄົມ; 10. ຄະນະຮັບຜິດຊອບດ້ານສາທາລະນະສຸກ; 11. ຄະນະຮັບຜິດຊອບດ້ານການປະຕິຮູບທີ່ດິນ; 12. ຄະນະຮັບຜິດຊອບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ. ສ່ວນການຈັດຕັ້ງລັດຖະບານ ຈະຕ້ອງລໍຖ້າຜົນການເລືອກປະທານສະພາ ໃນກອງປະຊຸມສະພາ ທີ່ຈະຈັດຂຶ້ນ ໃນວັນທີ 4 ກໍລະກົດ 2023 ນີ້, ຫຼັງຈາກນັ້ນ ຈະແມ່ນວາລະການເລືອກນາຍົກລັດຖະມົນຕີ ແລະ ຈັດຕັ້ງຄະນະລັດຖະບານໃນຂັ້ນຕໍ່ໄປ.

- ລະຫວ່າງວັນທີ 23-26/06/2023, ທ່ານ Narendra Modi, ນາຍົກລັດຖະມົນຕີອິນເດຍ ໄດ້ຢ້ຽມຢາມອາເມລິກາ ແລະ ເອຢິບ ຢ່າງເປັນທາງການ. ການຢ້ຽມຢາມອາເມລິກາ, ໄດ້ພົບກັບ ທ່ານ Joe Biden, ປະທານາທິບໍດີອາເມລິກາ, ສອງຝ່າຍ ໄດ້ອອກຖະແຫຼງການຮ່ວມກັນສືບຕໍ່ເພີ່ມທະວີການພົວພັນໃນຫຼາຍຂົງເຂດ ໂດຍສະເພາະທາງການທະຫານ ແລະ ເຕັກໂນໂລຊີ, ຊຶ່ງບໍລິສັດ General Electric ຂອງອາເມລິກາ ຈະຜະລິດເຄື່ອງຈັກ F414 ສຳລັບເຮືອບິນສູ້ຮົບ ຮ່ວມກັບບໍລິສັດ Hindustan Aeronautics ຂອງອິນເດຍ ແລະ ບໍລິສັດ Micron Technology, ບໍລິສັດຜະລິດ Chip ໃຫຍ່ທີ່ສຸດຂອງອາເມລິກາ ຈະລົງທຶນຫຼາຍກວ່າ 800 ລ້ານໂດລາ ໃນອິນເດຍ ເພື່ອຜະລິດ Semiconductor ເພາະຕ້ອງການຍ້າຍຖານການຜະລິດອອກຈາກຈີນ ແລະ ຊຸກຍູ້ໃຫ້ອິນເດຍເປັນສູນກາງການຜະລິດແທນ. ທ່ານ Modi ຍັງໄດ້

ກ່າວປາໄສຕໍ່ກອງປະຊຸມລັດຖະສະພາອາເມລິກາ ທີ່ເວົ້າເຖິງການຮ່ວມມືທາງດ້ານການທະຫານຂອງສອງປະເທດໃນໄລຍະຜ່ານມາ. ສ່ວນການຢ້ຽມຢາມເອຢິບ, ທ່ານ Modi ໄດ້ພົບປະກັບ ທ່ານ Abdel Fattah al-Sisi, ນາຍົກລັດຖະມົນຕີອີຢິບ ໂດຍຜູ້ນຳທັງສອງ ໄດ້ປຶກສາຫາລືຫຼາຍບັນຫາ ເປັນຕົ້ນດ້ານຄວາມໝັ້ນຄົງທາງອາຫານ, ພະລັງງານ, ການປ່ຽນແປງຂອງ ສະພາບດິນຟ້າອາກາດ ແລະ ອື່ນໆ. ພ້ອມນີ້, ຍັງໄດ້ອອກຖະແຫຼງການຮ່ວມກັນໃນການຍົກລະດັບການຮ່ວມມືສອງຝ່າຍ ໃຫ້ເປັນການພົວພັນຍຸດທະສາດຮອບດ້ານ.

**2). ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ**

ຄວາມຂັດແຍ່ງອູແກຣນ ແລະ ບັນຫາປິ່ນອ້ອມ ເປັນຕົ້ນ ແມ່ນ ກຸ່ມທະຫານຮັບຈ້າງ Wagner, ນຳໂດຍ ທ່ານ Evgeny Progozhin ທີ່ຮັບໃຊ້ກອງທັບລັດເຊຍ ໄດ້ກະທຳການ ທີ່ເອີ້ນວ່າ ການກະບົດ ໃນວັນທີ 23/06/2023 ຜ່ານມາ ໂດຍເຄື່ອນທະຫານຂອງຕົນ ເຂົ້າຄວບຄຸມສະຖານທີ່ທາງການທະຫານ ແລະ ສຳນັກງານປົກຄອງຫຼາຍແຫ່ງ ຢູ່ເມືອງ Rostov-on-Don ທາງພາກໃຕ້ຂອງລັດເຊຍ ຊຶ່ງສ້າງຄວາມເປັນຫ່ວງໃຫ້ແກ່ຫຼາຍຝ່າຍທີ່ກ່ຽວຂ້ອງ. .ໃນທີ່ສຸດ ເຫດການດັ່ງກ່າວ ໄດ້ສິ້ນສຸດລົງໃນເວລາພຽງ 36 ຊົ່ວໂມງ. ປະທານາທິບໍດີລັດເຊຍ, ທ່ານ Putin ໄດ້ປະສານກັບ ທ່ານ Alexander Lukashenko, ປະທານາທິບໍດີເບລາຣຸດຊີ ເຈລະຈາກັບກຸ່ມ Wagner ເຮັດໃຫ້ກຸ່ມ Wagner ຢຸດຕິແຜນການເຄື່ອນກຳລັງເຂົ້ານະຄອນຫຼວງມົດສະກູ ແລະ ໄດ້ເຄື່ອນກຳລັງເຂົ້າໄປເບລາຣຸດຊີ. ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ສະແດງຄວາມຂອບໃຈຕໍ່ທະຫານ ແລະ ກຸ່ມ Wagner ທີ່ຕັດສິນໃຈຢຸດຕິການກະທຳດັ່ງກ່າວ, ບໍ່ປ່ອຍໃຫ້ມີການເສຍເລືອດເນື້ອລະຫວ່າງພີ່ນ້ອງຮ່ວມຊາດ.

ສ່ວນການຕໍ່ສູ້ກັນ ລະຫວ່າງອູແກຣນ ແລະ ລັດເຊຍ ຍັງບໍ່ທັນມີທ່າອ່ຽງຈະຢຸດຕິ, ຍິ່ງຈະທະວີຄວາມຮຸນແຮງຂຶ້ນເລື້ອຍໆ. ຝ່າຍຕາເວັນຕົກ ແລະ ພັນທະມິດ ກໍຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ ຢ່າງຕໍ່ເນື່ອງ ເຊັ່ນ: ອິດສະຕຣາລີປະກາດຊ່ວຍເຫຼືອອູແກຣນຕື່ມອີກ 110 ລ້ານໂດລາອົດສະຕຣາລີ. ອີຢູ ປະກາດເພີ່ມກອງທຶນຊ່ວຍເຫຼືອດ້ານການທະຫານຕື່ມອີກ 3,5 ຕື້ເອີໂຣ (3,8 ຕື້ໂດລາ) ເພີ່ມຂຶ້ນເປັນ 12 ຕື້ໂດລາ. ຂະນະທີ່, ນາໂຕ້ ໄດ້ເລີ່ມຝຶກນັກບິນອູແກຣນຂັບເຮືອບິນສູ້ຮົບ F-16, ເຖິງແມ່ນວ່າການຈັດສົ່ງເຮືອບິນລຸ້ນດັ່ງກ່າວໃຫ້ອູແກຣນ ຍັງຢູ່ໃນຂັ້ນຕອນການປຶກສາຫາລືກໍຕາມ. ນອກນັ້ນ, ເຢຍລະມັນ ຍັງອ້າງວ່າພ້ອມຈະສົ່ງທະຫານ 4.000 ຄົນ ໄປຍັງລິດຕົວນີ ເພື່ອເພີ່ມກຳລັງປ້ອງກັນທາງພາກຕາເວັນຕົກຂອງນາໂຕ້. ກ່ອນໜ້ານີ້, ບັນດາປະເທດສະມາຊິກນາໂຕ້ ກໍໄດ້ຮ່ວມກັນຊ້ອມຮົບທາງບົກ ຢູ່ ພາກເໜືອຂອງແຝງລັງ ໂດຍມີທະຫານເຂົ້າຮ່ວມປະມານ 6.500 ຄົນ, ພາຫະນະ 1.000 ຄັນ. ນອກຈາກນັ້ນ, ລະຫວ່າງວັນທີ 12-23/06/2023, ບັນດາປະເທດສະມາຊິກນາໂຕ້ 25 ປະເທດ ໄດ້ຊ້ອມຮົບການປ້ອງກັນທາງອາກາດຄັ້ງໃຫຍ່ພາຍໃຕ້ຫົວຂໍ້ Air Defender 23 ຢູ່ 06 ຖານທັບຂອງເຢຍລະມັນ, ທີ່ອ້າງວ່າເປັນການຊ້ອມຮົບຄັ້ງທີ່ໃຫຍ່ທີ່ສຸດນັບຕັ້ງແຕ່ກຸ່ມດັ່ງກ່າວສ້າງຕັ້ງຂຶ້ນໃນປີ 1949, ປະກອບດ້ວຍເຮືອບິນສູ້ຮົບຫຼາຍກວ່າ 250 ລຳ (ເຮືອບິນຂອງອາເມລິກາ 100 ລຳ) ແລະ ກຳລັງທະຫານເກືອບ 10,000 ຄົນ.

**3). ສະພາບການ ໃນຂົງເຂດຕາເວັນອອກກາງ**

ຄວາມຂັດແຍ່ງລະຫວ່າງ ອິດສະລາແອນ ແລະ ປາແລັດສະຕິນ ຍັງເກີດຂຶ້ນຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນ ອິດສະລາແອນ ບຸກໂຈມຕີ ທີ່ພັກ Jenin Camp ຂອງປາແລັດສະຕິນ ໃນທ້າຍເດືອນ 6/2023 ເປັນຕົ້ນມາ ຊຶ່ງໄດ້ສ້າງຄວາມເສຍຫາຍດ້ານຊີວິດ ແລະ ຊັບສິນຢ່າງຫຼວງຫຼາຍ. ຜູ້ນຳປາແລັດສະຕິນ ຮຽກຮ້ອງໃຫ້ອົງການສະຫະປະຊາຊາດ ແລະ ປະເທດມະຫາອຳນາດ ຊ່ວຍເປັນຄົນກາງໃນການແກ້ໄຂຄວາມເຄັ່ງຕຶງຂອງສອງຝ່າຍດັ່ງກ່າວ. ຊຶ່ງ ລະຫວ່າງວັນທີ 13-16 ມິຖຸນາ 2023 ຜ່ານມາ, ທ່ານ Mahmoud Abbas, ປະທານາທິບໍດີປາແລັດສະຕິນ ກໍໄດ້ຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ, ໄດ້ພົບກັບ ທ່ານ ສີ ຈິ້ນຜິງ, ປະທານປະເທດ ສປ ຈີນ, ໄດ້ແລກປ່ຽນກ່ຽວກັບການພັດທະນາ ຂອງສອງປະເທດ, ບັນຫາຄວາມຂັດແຍ່ງລະຫວ່າງອິດສະລາແອນ ແລະ ປາແລັດສະຕິນ ຕະຫຼອດຮອດບັນຫາລວມ ໃນພາກພື້ນຕາເວັນອອກກາງ. ທ່ານ Mahmoud Abbas ຍັງໄດ້ພົບກັບທ່ານ ຫຼີສຽງ, ນາຍົກລັດຖະມົນຕີ ແລະ ທ່ານ ສິນກັງ, ລັດຖະມົນຕີຕ່າງປະເທດ ສປ ຈີນ, ຊຶ່ງໄດ້ຢ້ຳຄືນການຊຸກຍູ້ໃຫ້ປາແລັດສະຕິນ ໄດ້ຮັບສິດໃນການເປັນລັດ ທີ່ຖືກຕ້ອງຕາມກົດໝາຍ ແລະ ຈະສະໜັບສະໜູນການເຈລະຈາສັນຕິພາບ ລະຫວ່າງອິດສະລາແອນ ແລະ ປາແລັດສະຕິນ ໃຫ້ໄວທີ່ສຸດ ເທົ່າທີ່ເປັນໄປໄດ້ ບົນພື້ນຖານການແກ້ໄຂບັນຫາຂອງ ສອງລັດ.

ຄຽງຄູ່ກັບຄວາມເຄັ່ງຕຶງຂອງສອງປະເທດດັ່ງກ່າວ, ຍັງມີບັນຍາກາດຂອງການຮ່ວມມືຂອງບັນດາປະເທດໃນພາກພື້ນນີ້ ໂດຍສະເພາະລະຫວ່າງວັນທີ 11-12/06/2023, ອາຣັບບີ ຊາອຸດິດ ໄດ້ເປັນເຈົ້າພາບຈັດກອງປະຊຸມເສດຖະກິດອາ

ຣັບ- ສປ ຈີນ ຄັ້ງ ທີ 10 ທີ່ ນະຄອນຣິຢາດ ໂດຍມີຜູ້ເຂົ້າຮ່ວມຫຼາຍກວ່າ 3.000 ຄົນ ຈາກ 20 ກວ່າປະເທດ. ກອງປະຊຸມໄດ້ບັນລຸຂໍ້ຕົກລົງຮ່ວມກັນລະຫວ່າງບັນດາປະເທດອາຣັບ-ສປ ຈີນ ທີ່ມີມູນຄ່າ 10 ພັນລ້ານໂດລາ ກວມເອົາຫຼາຍຂົງເຂດ ເປັນຕົ້ນ ເຕັກໂນໂລຊີ, ກະສິກຳ, ພະລັງງານທົດແທນ, ອະສັງຫາລິມະຊັບ, ຊັບພະຍາກອນທຳມະຊາດ ແລະ ການທ່ອງທ່ຽວ. ທ່ານ Faisal bin Farhan Al Saud, ລັດຖະມົນຕີຕ່າງປະເທດອາຣັບບີ ຊາອຸດິດ ໄດ້ກ່າວວ່າ ກອງປະຊຸມຄັ້ງນີ້ມີຄວາມສຳຄັນໃນການເສີມສ້າງອະນາຄົດ ແລະ ຜົນປະໂຫຍດຮ່ວມກັນລະຫວ່າງໂລກອາຣັບ ແລະ ປະຊາຊົນຈີນ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# II. ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ

## 1. ສະຫາຍເລຂາທິການໃຫຍ່, ປະທານປະເທດ ທອງລຸນ ສີສຸລິດ ຢ້ຽມຢາມ ສປ ຈີນ



ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ແລະ ການສ້າງຄູ່ຮ່ວມຊະຕາກຳລາວ-ຈີນ ໃຫ້ເລິກເຊິ່ງຕື່ມອີກກ້າວໜຶ່ງ, ໃນລະຫວ່າງວັນທີ 15-19 ມິຖຸນາ 2023, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງ ຂອງພັກ, ລັດລາວ ໄດ້ຢ້ຽມຢາມ 3 ແຂວງ ຂອງ ສປ ຈີນ ຄື: ແຂວງຢຸນນານ, ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ທີ່ ນະຄອນໜານນິງ ແລະ ນະຄອນສີງຊື້ງ.

ໃນໄລຍະການຢ້ຽມຢາມ 3 ແຂວງດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ ໄດ້ພົບປະກັບການນຳຂັ້ນສູງຂອງແຂວງ ເຊັ່ນ: ສະຫາຍ ຫລີ ຊີ, ກຳມະການປະຈຳກົມການເມືອງສູນກາງພັກ, ປະທານຄະນະກຳມະການກວດກາລະບຽບວິໄນສູນກາງພັກກອມມູນິດຈີນ; ສະຫາຍ ຫຼິວ ໜິງ, ກຳມະການສູນກາງພັກ, ເລຂາຄະນະພັກເຂດ, ປະທານສະພາປະຊາຊົນເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ທີ່ນະຄອນໜານນິງ; ສະຫາຍ ຢວນ ເຈ່ຍຈຸນ, ກຳມະການກົມການເມືອງສູນກາງພັກກອມມູນິດຈີນ, ເລຂາພັກນະຄອນສີງຊື້ງ. ສອງຝ່າຍ ຕ່າງໄດ້ແຈ້ງໃຫ້ກັນຊາບ ກ່ຽວກັບ ສະພາບການທີ່ພົ້ນເດັ່ນພາຍໃນພັກ-ພາຍໃນປະເທດ ແລະ ການເຄື່ອນໄຫວຕ່າງປະເທດໃຫ້ກັນຊາບ, ໂດຍສະເພາະແມ່ນໝາກຜົນ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ກອງປະຊຸມໃຫຍ່ ຄັ້ງທີ XX ຂອງພັກກອມມູນິດຈີນ ທີ່ທັງສອງຝ່າຍຍາດມາໄດ້ໃນໄລຍະຜ່ານມາ; ໄດ້ຮ່ວມກັນຕີລາຄາສູງ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ມີຜົນສຳເລັດຕົວຈິງ ກໍຄື ການສ້າງຄູ່ຮ່ວມຊະຕາກຳລາວ-ຈີນ, ຈີນ-ລາວ ທີ່ທັງສອງຝ່າຍພ້ອມກັນຍາດມາໄດ້ ໃນໄລຍະຜ່ານມາ ໂດຍສະເພາະແມ່ນການເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ທີ່ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ; ໄດ້ຕີລາຄາສູງ ຕໍ່ຜົນສຳເລັດຂອງການຢ້ຽມຢາມ ສປ ຈີນ ທາງລັດຖະກິດ ຂອງສະຫາຍ ເລຂາທິການໃຫຍ່, ປະທານປະເທດ ທອງລຸນ ສີສຸລິດ ໃນທ້າຍປີ 2022 ທີ່ຜ່ານມາ ກໍຄື ຜົນສຳເລັດຂອງການຈັດຕັ້ງປະຕິບັດ ຖະແຫຼງການຮ່ວມ ທີ່ທັງສອງຝ່າຍ ໄດ້ຕົກລົງນຳກັນ; ໄດ້ພ້ອມກັນປຶກສາຫາລື ແລະ ເຫັນດີເປັນເອກະພາບນຳກັນ ກ່ຽວກັບ ທິດທາງແຜນການຕໍ່ໜ້າ ໃນການສືບຕໍ່ຊຸກຍູ້ ສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊະຕາກຳລາວ-ຈີນ ໃຫ້ນັບມື້ນັບແຕກດອກອອກຜົນຍິ່ງໆຂຶ້ນ.

ໃນເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ, ສະຫາຍ ທອງລຸນ ສີສຸລິດ ຍັງໄດ້ຢ້ຽມຢາມ ມະຫາວິທະຍາໄລຊົນເຜົ່າກວາງຊີ ແລະ ໄດ້ກ່າວປາໄສ ໃນຫົວຂໍ້ "ສືບສານມູນເຊື້ອມິດຕະພາບ, ສືບຕໍ່ສ້າງຄູ່ຮ່ວມຊະຕາກໍາລາວ-ຈີນ ໃຫ້ເຂົ້າສູ່ລວງເລິກ, ພ້ອມກັນກ້າວເດີນໄປໜ້າ ສູ່ອະນາຄົດ"; ນອກຈາກນັ້ນ, ຍັງໄດ້ຢ້ຽມຢາມບ້ານຊົນນະບົດ ທີ່ເປັນຕົວແບບການພັດທະນາຊົນນະບົດ-ລຶບລ້າງຄວາມທຸກຍາກ ແລະ ຢ້ຽມຢາມສະຖານທີ່ສໍາຄັນທາງດ້ານວັດທະນະທໍາ-ທໍາມະຊາດຈໍານວນໜຶ່ງ ຂອງນະຄອນໜານນິງ ຕື່ມອີກ.

**2. ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງສານອວຍພອນພັກກອມມູນິດຈີນ ຄົບຮອບ 102 ປີ**

ວັນທີ 01/07/2023, ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 102 ປີ, ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ສົ່ງສານອວຍພອນ ເຖິງຄະນະບໍລິຫານງານສູນກາງພັກກອມມູນິດຈີນ, ມີເນື້ອໃນບາງຕອນວ່າ: ພວກຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ຕະຫຼອດໄລຍະ 102 ປີທີ່ຜ່ານມາ, ພັກກອມມູນິດຈີນ ໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງຢ່າງບໍ່ຢຸດຢັ້ງ, ນໍາພາປະຊາຊົນຈີນ ອ້າຍນ້ອງ ເຮັດສໍາເລັດພາລະກິດປົດປ່ອຍຊາດ, ຍາດໄດ້ຜົນສໍາເລັດອັນມະຫັດສະຈັນ ແລະ ມີຄວາມໝາຍປະຫວັດສາດ ໃນການສ້າງສາພັດທະນາປະເທດຊາດ ຕາມເສັ້ນທາງສັງຄົມນິຍົມ ທີ່ມີສີສັນພິເສດຂອງຈີນ; ພັກປະຊາຊົນປະຕິວັດລາວ ຕີລາຄາສູງ ແລະ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ບັນດາຜົນສໍາເລັດອັນໃຫຍ່ຫຼວງ, ຮອບດ້ານ ທີ່ພັກ, ລັດຖະບານ ແລະ ປະຊາຊົນຈີນ ອ້າຍນ້ອງຍາດມາໄດ້ຕະຫຼອດໄລຍະຜ່ານມາ ໂດຍສະເພາະແມ່ນການບັນລຸເປົ້າໝາຍ 100 ປີ ເທື່ອທີ 1 ກໍຄື ການສູ້ຊົນສ້າງສັງຄົມນິຍົມທີ່ທັນສະໄໝແບບຈີນ ເພື່ອກ້າວໄປສູ່ການບັນລຸເປົ້າໝາຍ 100 ປີ ເທື່ອທີ 2 ຢ່າງໜັກແໜ້ນ ແລະ ມີໄຊ. ຜົນສໍາເລັດດັ່ງກ່າວ ໄດ້ເປັນບົດຮຽນອັນລໍ້າຄ່າ ແລະ ເປັນກໍາລັງໃຈອັນແຮງກ້າໃຫ້ແກ່ ພັກ, ລັດ ແລະ ປະຊາຊົນລາວ ໃນການສືບຕໍ່ດໍາເນີນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສູ່ຈຸດໝາຍສັງຄົມນິຍົມໃນໄລຍະໃໝ່; ເຊື່ອໝັ້ນວ່າ ພາຍໃຕ້ການນໍາພາຊີ້ນໍາຢ່າງໃກ້ຊິດຂອງສອງສູນກາງພັກ ລາວ-ຈີນ, ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ນັບມື້ນັບໄດ້ຮັບການເສີມຂະຫຍາຍ ແລະ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ການສ້າງຄູ່ຮ່ວມຊະຕາກໍາ ລາວ-ຈີນ, ຈີນ-ລາວ ໄດ້ຮັບການເສີມຂະຫຍາຍທັງທາງກວ້າງ ແລະ ເຂົ້າສູ່ລວງເລິກຢ່າງເປັນຮູບປະທໍາ, ນໍາເອົາຜົນປະໂຫຍດຕົວຈິງ ມາສູ່ພາລະກິດປະຕິວັດ ແລະ ປະຊາຊົນສອງຊາດພວກເຮົາຢ່າງແທ້ຈິງ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ພວກຂ້າພະເຈົ້າ ຂໍອວຍພອນໃຫ້ ພັກກອມມູນິດຈີນ ອັນມີ ສະຫາຍ ສີຈິ້ນຜິງ ເປັນແກນກາງນໍາໜ້າ ຈົ່ງສືບຕໍ່ຍາດໄດ້ຜົນສໍາເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດແຫ່ງການພັດທະນາປະເທດຊາດ ຕາມເສັ້ນທາງສັງຄົມນິຍົມທີ່ມີສີສັນພິເສດ ຂອງ ຈີນ ທີ່ທັນສະໄໝ, ປະສົບຜົນສໍາເລັດ ແລະ ບັນລຸເປົ້າໝາຍໃນການສ້າງ ສປ ຈີນ ເປັນປະເທດສັງຄົມນິຍົມທີ່ທັນສະໄໝເຂັ້ມແຂງ, ຈະເລີນຮຸ່ງເຮືອງ, ປະຊາທິປະໄຕ, ສີວິໄລ, ກົມກຽວປອງດອງ ແລະ ສວຍງາມ.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກໍາ ລາວ-ຈີນ, ຈີນ-ລາວ ຈົ່ງສືບຕໍ່ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ແລະ ນໍາເອົາຜົນປະໂຫຍດຕົວຈິງມາສູ່ ປະຊາຊົນສອງຊາດ ລາວ-ຈີນ ໃຫ້ນັບມື້ນັບຫຼາຍຂຶ້ນ.

**3. ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງສານອວຍພອນວັນສ້າງຕັ້ງພັກປະຊາຊົນກຳປູເຈຍ ຄົບຮອບ 72 ປີ**

ເນື່ອງໃນໂອກາດ ວັນສ້າງຕັ້ງ ພັກປະຊາຊົນ ກຳປູເຈຍ ຄົບຮອບ 72 ປີ (28/06/1951-28/06/2023), ຄະນະບໍລິຫານງານສູນກາງ ພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງສານອວຍພອນ ໄປຍັງຄະນະບໍລິຫານງານສູນກາງພັກ ປະຊາຊົນ ກຳປູເຈຍ ຊຶ່ງມີເນື້ອໃນວ່າ: ພວກຂ້າພະເຈົ້າ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງ ແຫ່ງການສ້າງສາ ແລະ ພັດທະນາປະເທດຊາດ ທີ່ ປະຊາຊົນ ກຳປູເຈຍ ພາຍໃຕ້ການນຳພາຂອງ ພັກປະຊາຊົນ ກຳປູເຈຍ ຍາດມາໄດ້ຕະຫຼອດໄລຍະ 72 ປີ ຜ່ານມາ, ອັນໄດ້ເຮັດໃຫ້ປະເທດມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເສດຖະກິດ ສືບຕໍ່ໄດ້ຮັບການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ຊີວິດການເປັນຢູ່ຂອງ ປະຊາຊົນ ກຳປູເຈຍ ອ້າຍນ້ອງ ນັບມື້ໄດ້ຮັບການປັບປຸງປ່ຽນແປງດີຂຶ້ນເທື່ອລະກ້າວ, ຖານະບົດບາດອິດທິພົນຂອງ ພັກປະຊາຊົນ ກຳປູເຈຍ ນັບມື້ນັບສູງເດັ່ນຂຶ້ນ ໃນເວທີການເມືອງພາຍໃນປະເທດ ແລະ ເວທີສາກົນ.

ພວກຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ສາຍພົວພັນມິດຕະພາບ, ຄວາມສາມັກຄີອັນເປັນມູນເຊື້ອ ແລະ ການພົວພັນຮ່ວມມື ແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນ 2 ຊາດ ລາວ-ກຳປູເຈຍ ນັບມື້ນັບໄດ້ຮັບການເສີມຂະຫຍາຍ, ປະກອບສ່ວນສຳຄັນເຂົ້າໃນພາລະກິດສ້າງສາພັດທະນາຂອງສອງປະເທດ ລາວ ແລະ ກຳປູເຈຍ; ພວກຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງພັກປະຊາຊົນ ກຳປູເຈຍ ອັນມີ ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ ເປັນຜູ້ນຳ, ພັກປະຊາຊົນກຳປູເຈຍ ຈະສືບຕໍ່ຍາດໄດ້ຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດສ້າງສາພັດທະນາປະເທດຊາດ ກ້າວສູ່ຄວາມຈະເລີນວັດທະນະຖາວອນ.

ຂໍອວຍພອນໃຫ້ສາຍພົວພັນມິດຕະພາບ, ການຮ່ວມມືທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກປະຊາຊົນ ກຳປູເຈຍ ຈົ່ງໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນ ສອງຊາດ ກໍຄືພາລະກິດແຫ່ງການເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຄຕພ ເຜີຍແຜ່ເອກະສານການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງອົງຄະນະພັກແຕ່ລະຂັ້ນ




ວັນທີ 13 ມິຖຸນາ 2023 ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ເຜີຍແຜ່ເອກະສານເພື່ອກະກຽມໃຫ້ແກ່ກອງປະຊຸມຄົບຄະນະກາງສະໄໝ ໂດຍການໃຫ້ກຽດເຜີຍແຜ່ ຂອງ ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ເລຂາຄະນະພັກ ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານທົ່ວ ຄຕພ ເຂົ້າຮ່ວມ ຈຳນວນ 102 ສະຫາຍ. ເອກະສານທີ່ນຳມາເຜີຍແຜ່ຄັ້ງນີ້ມີ: ຄຳສັ່ງ ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023; ຄຳແນະນຳການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ ສະບັບເລກທີ 25/ຄຈສພ, ລົງວັນທີ 24/1/2023, ຄຳແນະນຳເລກທີ 74/ຄກສພ, ລົງວັນທີ 27 ມີນາ 2023; ແລະ ມະຕິຕົກລົງວ່າດ້ວຍມາດຖານຂອງພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018.

ໃນການເຊື່ອມຊຶມຄັ້ງນີ້ ສະຫາຍປະທານກອງປະຊຸມ ໄດ້ຍົກໃຫ້ເຫັນຄວາມສຳຄັນ ແລະ ຈຳເປັນ, ຈຸດປະສົງ, ເນື້ອໃນ, ເປົ້າໝາຍ, ມາດຖານບຸກຄະລາກອນ ແລະ ຂັ້ນຕອນຕ່າງໆ ຂອງການຈັດກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກຄະນະພົວພັນຕ່າງປະເທດສູນກາງພັກ ຊຶ່ງແມ່ນຄວາມຈຳເປັນພາວະວິໄສ ແລະ ແມ່ນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ເພື່ອປັບປຸງ, ເຊີດຊູສະຕິຄວາມຮັບຜິດຊອບຂອງຄະນະພັກ, ໜ່ວຍພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງສູນກາງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ວາງໄວ້.

## 2. ຫົວໜ້າ ຄຕພ ລາວ ແລະ ຫວຽດນາມ ຮ່ວມກັນປູກຕົ້ນໄມ້ ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ



ວັນທີ 02 ມິຖຸນາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ສະຫາຍ ເລ ຮວ່າຍ ຈຸງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍພະນັກງານຂອງສອງພາກສ່ວນ ໄດ້ຮ່ວມກັນປູກຕົ້ນໄມ້ (ຕົ້ນຈຳປາ) ຢູ່ບໍລິເວນດ້ານໜ້າ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ (ຫຼັກ 06), ເນື່ອງໃນໂອກາດທີ່ສະຫາຍ ເລ ຮວ່າຍ ຈຸງ ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງວັນທີ 01-02 ມິຖຸນາ 2023. ພິທີປູກຕົ້ນໄມ້ໃນຄັ້ງນີ້ ແມ່ນເປັນສັນຍາລັກ ແຫ່ງໄມຕີຈິດມິດຕະພາບທີ່ສະໜິດສະໜົມ ລະຫວ່າງຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ, ເປັນການສະເຫຼີມສະຫຼອງວັນປູກຕົ້ນໄມ້ແຫ່ງຊາດ ປະຈຳປີ 2023 ແລະ ທັງເປັນການສ້າງຂະບວນການຂ່ຳນັບຮັບຕ້ອນວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຄົບຮອບ 40 ປີ ໃນວັນທີ 29/06/2023.

### 3. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າອວຍພອນໃນໂອກາດວັນສ້າງຕັ້ງ ຄຕພ ຄົບຮອບ 40 ປີ ຂອງເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ



ວັນທີ 28 ມິຖຸນາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ພ້ອມດ້ວຍພະນັກງານຫຼັກແຫຼ່ງ ໄດ້ຕ້ອນຮັບ ສະຫາຍ ຫງວຽນ ບ່າຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານຂອງສະຖານທູດ ເຂົ້າອວຍພອນ ເນື່ອງໃນໂອກາດວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ (29/06/1983-29/06/2023). ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍ ຫງວຽນ ບ່າຮຸ່ງ ພ້ອມດ້ວຍຄະນະ ທີ່ມາອວຍພອນ ໃນໂອກາດວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ ຄັ້ງນີ້ ເຊິ່ງເປັນການສະແດງເຖິງການຖືສຳຄັນ ແລະ ມິດຈິດມິດໃຈແຫ່ງການພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ກໍຄື ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖານເອກອັກຄະລັດຖະທູດຫວຽດນາມ. ສະຫາຍ ຫງວຽນ ບ່າຮຸ່ງ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດ ແລະ ຜົນງານອັນໃຫຍ່ຫລວງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຍາດມາໄດ້ຕະຫຼອດໄລຍະ 40 ປີ ທີ່ຜ່ານມາ ໂດຍຍຶດໝັ້ນແນວທາງນະໂຍບາຍການຕ່າງປະເທດ ທີ່ກອງປະຊຸມໃຫຍ່ ແຕ່ລະສະໄໝຂອງພັກ ໄດ້ວາງອອກ, ເສີມຂະຫຍາຍການພົວພັນດ້ານພັກ, ເຊິ່ງມາເຖິງປັດຈຸບັນ ພັກ ປປ ລາວ ໄດ້ມີການພົວພັນດ້ານພັກກັບ 140 ພັກການເມືອງ ຈາກ 83 ປະເທດ ໃນທົ່ວໂລກ.

### 4. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມອໍາລາ ຂອງເອກອັກຄະລັດຖະທູດສິງກະໂປ ປະຈໍາ ສປປ ລາວ



ວັນທີ 22 ມິຖຸນາ 2023, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອໍາລາຂອງ ທ່ານ ນາງ ຫຼຽວ ຊຸຍ ຫຼິນ ( Leow Siu lin ), ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສິງກະໂປ ປະຈໍາ ສປປ ລາວ. ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍຕໍ່ ທ່ານເອກອັກຄະລັດຖະທູດ ທີ່ໄດ້ປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ດ້ວຍຜົນສໍາເລັດ, ປະກອບສ່ວນສໍາຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ລະຫວ່າງ ລາວ-ສິງກະໂປ ໃນໄລຍະທີ່ຜ່ານມາ, ຊ່ວຍຊຸກຍູ້ການພົວພັນຮ່ວມມືໃນຂົງເຂດຕ່າງໆຂອງ 2 ປະເທດ ຢ່າງຕັ້ງໜ້າ ເປັນຕົ້ນ ດ້ານການເມືອງ, ດ້ານການສຶກສາ, ການຊ່ວຍເຫຼືອທາງດ້ານມະນຸດສະທໍາ ໃນໄລຍະການແຜ່ລະບາດຂອງພະຍາດ ໂຄວິດ-19, ການຄ້າ-ການລົງທຶນ, ການທ່ອງທ່ຽວ ແລະ ວຽກງານການຮ່ວມມືອື່ນໆໃຫ້ມີບາດກ້າວຂະຫຍາຍຕົວໃໝ່.

ທ່ານເອກອັກຄະລັດຖະທູດສິງກະໂປ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງ ທີ່ໄດ້ມີໂອກາດເຂົ້າຢ້ຽມອໍາລາ ທ່ານຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງ 2 ປະເທດ ສິງກະໂປ ແລະ ລາວ ໃນໄລຍະທີ່ຜ່ານມາ, ພ້ອມທັງສະແດງຄວາມຂອບໃຈຕໍ່ ພັກ-ລັດຖະບານລາວ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອຕົນເອງຕະຫຼອດໄລຍະປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ຈົນໄດ້ຮັບຜົນສໍາເລັດຈົບງາມ.

5. **ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງ ຄະນະຜູ້ແທນຂັ້ນສູງ ມູນນິທິຈີນ ເພື່ອສັນຕິພາບ ແລະ ການພັດທະນາ**



ໃນໂອກາດຢ້ຽມຢາມ ແລະ ເຮັດ ວຽກ ຢູ່ ສປປ ລາວ ແຕ່ວັນທີ 26-30 ພຶດສະພາ 2023 ຂອງຄະນະຜູ້ແທນກອງທຶນເພື່ອສັນຕິພາບ ແລະ ພັດທະນາ, ວັນທີ 30 ພຶດສະພາ 2023 ຄະນະດັ່ງກ່າວ ໄດ້ເຂົ້າຢ້ຽມຂ່ຳນັບ ສະຫາຍ ສົມມາດ ພົລເສນາ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ. ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກ ຂອງ ຄະນະຜູ້ແທນຄັ້ງນີ້ ຖືເປັນການປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືແບບຄູ່ຮ່ວມຍຸດທະສາດ, ຮອບດ້ານ, ໝັ້ນຄົງຍາວນານ ຕາມທິດສີ່ດີ ແລະ ຄູ່ຮ່ວມຊະຕາກຳ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ຈີນ. ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງອົງການຈັດຕັ້ງສັນຕິພາບ ໃນການປະກອບສ່ວນເຂົ້າໃນການສ້າງສາພັດທະນາ ສປປ ລາວ ເປັນຕົ້ນແມ່ນການພັດທະນາພື້ນຖານໂຄງລ່າງການສຶກສາ, ສາທາລະນະສຸກ ແລະ ມະນຸດສະທຳ. ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ ໄດ້ພົວພັນຮ່ວມມືກັນແຕ່ປີ 2012 ເປັນຕົ້ນມາ; ໄດ້ຮ່ວມກັນສ້າງ ໂຮງຮຽນປະຖົມ ແລະ ມັດທະຍົມແລ້ວຈຳນວນ 12 ຫຼັງ, ຊ່ວຍເຫຼືອອຸປະກອນການຮຽນການສອນ, ອຸປະກອນການແພດໄລຍະການລະບາດ ຂອງພະຍາດໂຄວິດ 19 ລວມມູນຄ່າການຊ່ວຍເຫຼືອໃນໄລຍະຜ່ານມາ 3,500,000 ກວ່າໂດລາສະຫະລັດ ແລະ ໄລຍະປີ 2023-2025 ກອງທຶນຈີນເພື່ອສັນຕິພາບ ແລະ ການພັດທະນາ ຍັງຈະໃຫ້ການຊ່ວຍເຫຼືອງົບປະມານອີກ 1,360,000 ໂດລາສະຫະລັດ. ຄະນະດັ່ງກ່າວ ຍັງໄດ້ເຂົ້າຢ້ຽມຂ່ຳນັບ ສະຫາຍ ນາງ ຂັນທະລີ ສິຣິພົງພັນ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ເຂົ້າຮ່ວມພິທີວາງສີລາເລີກໂຄງການກໍ່ສ້າງໂຮງຮຽນປະຖົມ 5 ຫຼັງໃນ 3 ແຂວງ (ສະຫວັນນະເຂດ, ສາລະວັນ ແລະ ໄຊຍະບູລີ), ເຊິ່ງເປັນໂຄງການທີ່ພວມກຳລັງດຳເນີນການໃນປະຈຸບັນ ແລະ ຢ້ຽມຢາມໂຮງຮຽນປະຖົມສົມບູນບ້ານໜອງປີງ, ເມືອງຈັນທະບູລີ (2013), ໂຮງຮຽນມັດທະຍົມຕົ້ນບ້ານເມືອງນ້ອຍ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ (2019) ແລະ ໂຮງຮຽນມັດທະຍົມສົມບູນພອນໄຊ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ (2016).

**6. ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈໍາລາວ**



ວັນທີ 27 ມິຖຸນາ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ລີຢົງໂຊ, ເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈໍາ ສປປ ລາວ, ຊຶ່ງ ສະຫາຍ ລີຢົງໂຊ ໄດ້ນໍາເອົາເອກະສານຜົນສໍາເລັດຂອງກອງປະຊຸມຄົບຄະນະບໍລິຫານງານ ຄັ້ງທີ 8 ສະໄໝທີ 8 ຂອງພັກແຮງງານເກົາຫຼີ ມາມອບໃຫ້ພັກປະຊາຊົນ ປະຕິວັດລາວ. ໃນນັ້ນ, ສອງຝ່າຍ ໄດ້ແລກປ່ຽນບັນຫາພາຍໃນພັກຂອງຕົນ, ບັນຫາພາກພື້ນ ແລະ ສາກົນ ທີ່ສົນໃຈຮ່ວມກັນ.

# IV. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ

**ພິທີມອບທຸງໄຊນຳໜ້າຂະບວນການແຂ່ງຂັນ 04 ບຸກ ໃຫ້ແກ່ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມອບຫຼຽນກາລະນຶກວັນສ້າງຕັ້ງ ຄຊປປລ ຄົບຮອບ 65 ປີໃຫ້ແກ່ ບຸກຄົນ ແລະ ກົມກອງ ຂອງ ຄຕພ**



ວັນທີ 12 ມິຖຸນາ 2023 ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ (ຫຼັກ 6) ໄດ້ມີພິທີມອບທຸງໄຊນຳໜ້າຂະບວນການແຂ່ງຂັນ 4 ບຸກ ໃຫ້ແກ່ ຄະນະຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມອບຫຼຽນກາລະນຶກ ວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 65 ປີ ໃຫ້ແກ່ ບຸກຄົນ ແລະ ກົມກອງ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ. ໃຫ້ກຽດເຂົ້າຮ່ວມໃນພິທີ ມີ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ສະຫາຍ ມອນໄຊ ລາວມົວຊື່ງ, ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ; ສະຫາຍ ຄຳເຟືອງ ພັນທະໄຊ, ກຳມະການຄະນະພັກ, ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ; ຍັງມີບັນດາສະຫາຍຄະນະພັກ-ຄະນະນຳ, ເລຂາໜ່ວຍພັກ, ປະທານອົງການຈັ້ດຕັ້ງມະຫາຊົນ ຄຕພ, ຄະນະຊາວໜຸ່ມອ້ອມຂ້າງສູນກາງພັກ, ຄະນະບໍລິຫານງານຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ພາກສ່ວນກ່ຽວຂ້ອງ ຂອງສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ຄຳເຟືອງ ພັນທະໄຊ, ເລຂາຄະນະບໍລິຫານງານຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນຜ່ານບົດສະຫຼຸບລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2021, ເຊິ່ງໄດ້ຕີລາຄາຜົນສຳເລັດການຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 4 ບຸກ ຕາມ 4 ເນື້ອໃນ 10 ມາດຖານ ຢ່າງພາວະວິໃສ, ພ້ອມທັງສັງເກດຕີລາຄາດ້ານດີ, ຈຸດຄົງຄ້າງ ແລະ ວາງທິດທາງໜ້າທີ່ຈຸດສຸມ ທີ່ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອງໄດ້ສູ້ຊົນຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຫາຍ ມອນໄຊ ລາວມົວຊື່ງ, ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານ

ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດ ຂອງ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ຍາດມາໄດ້ໃນໄລຍະຜ່ານມາ ເຊິ່ງເປັນການສະແດງໃຫ້ເຫັນຜົນງານການເຄື່ອນໄຫວຮອບດ້ານ ຂອງ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ. ພ້ອມນັ້ນ, ຍັງໄດ້ໃຫ້ທິດຊີ້ນຳ ແກ່ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ໃນການຈັດຕັ້ງປະຕິບັດວຽກງານຊາວໜຸ່ມ ຕິດພັນກັບວຽກງານວິຊາສະເພາະໃນຕໍ່ໜ້າ ໃຫ້ມີບາດກ້າວອັນໃໝ່, ມີປະສິດທິພາບ ແລະ ປະສິດທິຜົນ.